DVV International

Education for Everyone. Worldwide. Lifelong.

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

# ຈົດໝາຍຂ່າວ

## ການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສານອກໂຮງຮຽນ ໃນ ສປປ ລາວ ແລະ ອາຊີຕາເວັນອອກສຽງໃຕ້



№3.2015

- ການປະກາດຈົບຊັ້ນປະຖົມສຶກສາບໍາລຸງທົ່ວປະເທດ
- ການສ້າງຄວາມເຂັ້ມແຂງໃນການດໍາເນີນງານ ແລະ ຄວາມອາດສາມາດ ຂອງບັນດາສູນການຮຽນຮູ້ຊຸມຊົນໃນ ກໍາປູເຈຍ
- ການເຮັດວຽກ ແລະ ການດໍາລົງຊີວິດ ໃນ ສປປ ລາວ
- ມອບ-ຮັບ ເສື້ອ ໃຫ້ແກ່ກົມການສຶກສານອກໂຮງຮຽນ
- ວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື

ສະໜັບສະໜູນໂດຍ
Federal Ministry for Economic Cooperation and Development

DVV International

ຈົດໝາຍຂ່າວ № 3/2015

Education for Everyone. Worldwide.
Lifelong.

# ບົດບັນນາທິການ

ທ່ານຜູ້ອ່ານທີ່ຮັກແພງ,

ເດືອນທີ່ຜ່ານມາເປັນເດືອນທີ່ຫຍຸ້ງຍາກຫຼາຍສໍາລັບຜູ້ໃຫ້ການສຶກສາ, ໃນລະດັບສາກົນ ການເຮັດວຽກໃໝ່ກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ(SDGs) ແມ່ນຜົນສະຫຼຸບ ຫຼັງຈາກທີ່ກອງປະຊຸມການສຶກສາໂລກໃນເດືອນ ພຶດສະພາ ທີ່ອິນຊອນ ປະເທດເກົາຫຼີ ຊຸມຊົນການສຶກສາໄດ້ສະເຫຼີມສະຫຼອງຄວາມສໍາເລັດໃໝ່ ລວມທັງການສຶກສາທີ່ມີຄຸນນະພາບ ແລະ ສົ່ງເສີມໂອກາດໃນການຮຽນຮູ້ຕະຫຼອດຊີວິດສໍາລັບທຸກຄົນ. ເປັນຄັ້ງທໍາອິດທີ່ທຸກດ້ານຂອງລະບົບການສຶກສາໄດ້ຮັບການຍອມຮັບ ແລະ ມີປະສິດທິພາບ ບໍ່ວ່າຈະເປັນ ອະນຸບານສຶກສາ, ໂຮງຮຽນສາມັນ, ອາຊີວະສຶກສາ, ການສຶກສາຊັ້ນສູງ ແລະ ການສຶກສາຜູ້ໃຫຍ່. ມັນເປັນຂ່າວດີຂອງພວກເຮົາທຸກຄົນ ໃນການສຶກສາຂອງຊາວໜຸ່ມ ແລະ ການສຶກສາຜູ້ໃຫ່ຍ! ໃນໄລຍະເດືອນຕໍ່ໄປເຮົາຄວນຮູ້ລ່ວງໜ້າ ວາລະການດໍາເນີນງານຂອງ ຜູ້ສະໜັບສະໜູນ
ເຂົ້າສູ່ນະໂຍບາຍລະດັບຊາດ ແລະ ຍຸດທະສາດຂອງຜູ້ໃຫ້ທຶນ. ມັນຈະເປັນສິ່ງສໍາຄັນທີ່ເປົ້າໝາຍທົ່ວໂລກຈະມາພ້ອມກັນໃນຂະນະນີ້, ໂດຍເປົ້າໝາຍ ແລະ ຕົວຊີ້ວັດທີ່ ສາມາດວັດບໍ່ພຽງແຕ່ການເຂົ້າໂຮງຮຽນ ຫຼື ການລົງທຶນໃນຂະແໜງອາຊີວະສຶກສາ ແຕ່ເຊັ່ນດຽວກັບເງື່ອນໄຂອໍານວຍຄວາມສະດວກສໍາລັບ ການສຶກສານອກໂຮງຮຽນ ຫຼື ອັດຕາການເຂົ້າຮຽນໃນການສຶກສານອກໂຮງຮຽນ.

ເດືອນຜ່ານມາການສຶກສານອກໂຮງຮຽນມີຄວາມຫຍຸ້ງຍາກຫຼາຍຄືກັນ, ພ້ອມດຽວກັນຂ້າພະເຈົ້າຂໍຖືໂອກາດສະແດງຄວາມຍິນດີນໍາຄູ່ຮ່ວມງານຂອງພວກເຮົາກໍຄືກະຊວງສຶກສາ ແລະ ກິລາ ກົມການສຶກສານອກໂຮງຮຽນ ໃນການສະເຫຼີມສະຫຼອງຄວາມສໍາເລັດຂອງການປະກາດຈົບຊັ້ນປະຖົມສຶກສາບໍາລຸງ ຊຶ່ງຈັດຂຶ້ນໃນວັນທີ 28 ສິງຫາ ຊຶ່ງເປັນລະດັບສູງສຸດ. ພວກເຮົາຮູ້ສຶກດີໃຈຫຼາຍໃນຄັ້ງນີ້ທີ່ໄດ້ເຫັນຄວາມມຸ່ງໝັ້ນຂອງທ່ານ ພັນຄໍາ ວິພາວັນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງສຶກສາທິການ ແລະ ເພື່ອສົ່ງເສີມນະໂຍບາຍການຮຽນຮູ້ຕະຫຼອດຊີວິດໃນ ສປປ ລາວ. ອີກກ້າວທີ່ສໍາຄັນຄືບົດສະຫຼຸບ ແຜນພັດທະນາຂະແໜງການສຶກສາ (ESDP) ສໍາລັບຊ່ວງໄລຍະປີ 2016-20 ອົງການ ດີວີວີ ອິນເຕີເນເຊິນແນວ ໄດ້ມີໂອກາດສະແດງຄວາມຄິດເຫັນໃນແຜນຍ່ອຍຂອງການສຶກສານອກໂຮງຮຽນ.

ສຸດທ້າຍແຕ່ບໍ່ແມ່ນທ້າຍສຸດ ພວກເຮົາມີຄວາມຫຍຸ້ງຍາກມາຄຽງຄູ່ກັນ ໃນຫ້ອງການພາກພື້ນຂອງພວກເຮົາ ພະນັກງານກໍາລັງກະກຽມແຜນກິດຈະກໍາທີ່ກໍາລັງຈະມີໃນເດືອນທີ່ຈະມາເຖິງ ການຝຶກອົບຮົມເພື່ອເພີ່ມຄຸນນະພາບໃຫ້ພະນັກງານ ເຊິ່ງໄດ້ຄູຝຶກຈາກຄູ່ຮ່ວມງານເພຣຍຈາກປະເທດອິນເດຍມາຊ່ວຍພວກເຮົາ, ກອງປະຊຸມແລກປ່ຽນສູນການສຶກສາເພື່ອຊຸມຊົນ ແລະແຜນຝຶກອົບຮົມຄູຝຶກສໍາລັບການສຶກສານອກໂຮງຮຽນ. ພວກເຮົາຍັງໄດ້ກ່າວຄໍາອໍາລາໃຫ້ພະນັກງານຝຶກຫັດ ນາງ ກາຕາ ໂຟດໍ ຜູ້ທີ່ໄດ້ຂຽນລາຍງານ ທ່ານສາມາດເຂົ້າອ່ານໄດ້ໃນສະບັບນີ້ ແລະ ຂໍຕ້ອນຮັບພະນັກງານຝຶກຫັດຄົນໃໝ່ ນາງ ແຄຣໍລິນ ຄໍເນີ.

ດ້ວຍຄວາມຮັກແພງ,

*ອູເວີ ກາເຕີນສະແລເກີ*

ຜູ້ອໍານວຍການປະຈໍາພາກພື້ນ

DVV International

Education for Everyone. Worldwide.
Lifelong.

# ປະກາດ ຈົບຊັ້ນປະຖົມສຶກສາບຳລຸງ ທົ່ວປະເທດ

## ບົດປາໄສຂອງພະນະທ່ານ ຈຸມມະລີ ໄຊຍະສອນ

### ເລຂາທິການໃຫຍ່ ຄະນະບໍລິການງານສູນກາງພັກປະຊາຊົນປະຕິວັດລາວ. ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນ້ອມນະມັດ ສະການ ພຣະເຖລາ ນຸເຖລະ

ບັນດາແຂກພາຍໃນ, ຕ່າງປະເທດ ທີ່ນັບຖື
ພີ່ນ້ອງຮ່ວມຊາດ ທີ່ຮັກແພງທັງຫຼາຍ

ຜ່ານຂະບວນວິວັດການຮຽນ-ການສອນ ໂດຍສະເພາະການຮຽນ-ການສອນນອກໂຮງ ຮຽນຂອງປະເທດເຮົາ ໄດ້ດຳເນີນມາຢ່າງລະອຽດ ລະອຽ້ວ ມີທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍນາໆປະການ. ພາຍໃຕ້ການນຳພາຂອງພັກ ແລະ ລັດຖະບານ, ດ້ວຍຄວາມຮັບຜິດຊອບຂອງທຸກພາກສ່ວນໃນສັງຄົມ ແລະ ການສະໜັບສະໜູນດ້ານງົບປະມານຂອງລັດຖະບານ ແລະ ຈາກອົງການຈັດຕັ້ງສາກົນ. ມາຮອດມື້ນີ້ ພັກ-ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ມີຄວາມເອກອ້າງທະນົງໃຈຕໍ່ຜົນສຳເລັດຂອງການສຶກສາ ໂດຍສະເພາະແມ່ນການສຶກສານອກໂຮງຮຽນ ຊຶ່ງພົນລະເມືອງລາວ ໄດ້ມີລະດັບການສຶກສາຈົບຊັ້ນປະຖົມສຶກສາບຳລຸງ. ໃນນາມປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກາດໃຫ້ພໍ່ແມ່ພີ່ນ້ອງຊາວລາວທົ່ວປະເທດ, ຊາວລາວອາໄສຢູ່ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ບັນດາປະເທດໃນໂລກຮັບຊາບວ່າ: ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໄດ້ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (ເປົ້າໝາຍທີ 2) ຕາມຄາດໝາຍຂອງເປົ້າໝາຍການສຶກສາໂລກ. ຖືເອົາພິທີອັນສະຫງ່າລາສີ ແລະ ເວລາ ນາທີ ເປັນສິລິມຸງຄຸນນີ້ ຂ້າພະເຈົ້າຂໍປະກາດຈົບຊັ້ນປະຖົມສຶກສາບຳລຸງທົ່ວປະເທດຢ່າງເປັນທາງການນັບແຕ່ບັດນີ້ເປັນຕົ້ນໄປ.

ຂໍຂອບໃຈ

ບົດປາໄສ ທີ່ພິທີໂຮມຊຸມນຸມ ປະກາດຈົບຊັ້ນປະຖົມສຶກສາບຳລຸງທົ່ວປະເທດ
ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ວັນທີ 28 / 8 / 2015
ບົດປາໄສ ຂອງພະນະທ່ານ ຈູມມະລີ ໄຊຍະສອນ,
ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ,
ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ກ່າວໃນພິທີໂຮມຊຸມນຸມ ປະກາດຈົບຊັ້ນປະຖົມສຶກສາບຳລຸງທົ່ວປະເທດ
ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ວັນທີ 28 / 8 / 2015



Education for Everyone. Worldwide.
Lifelong.

# ຜົນສຳເລັດການບຳລຸງຍົກລະດັບຈົບຊັ້ນປະຖົມສຶກສາບຳລຸງທົ່ວປະເທດ ຕໍ່ພິທີໂຮມຊຸມນຸມປະກາດຈົບຊັ້ນປະຖົມສຶກສາທົ່ວປະເທດ

## ບົດລາຍງານຂອງທ່ານ ພັນຄຳ ວິພາວັນ ຮອງນາຍົກ ລັດຖະມົນຕີ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະ ກິລາ



ນ້ອມນະມັດ ສະການ ພະອາຈານ

ຮຽນ: - ພະນະທ່ານ ຈູມມະລີ ໄຊຍະສອນ, ເລຂາທິການໃຫຍ່ຄະນະ ບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ
- ບັນດາທ່ານ ການນຳພັກ - ລັດ ທີ່ນັບຖື
- ບັນດາທ່ານ ຍິງ - ທ່ານຊາຍ ທີ່ນັບຖື

ຂ້າພະເຈົ້າ, ຕາງໜ້າໃຫ້ການນຳຂະແໜງການສຶກສາ ແລະ ກິລາ ຂໍລາຍງານ ກ່ຽວກັບຜົນສຳເລັດການບຳລຸງຍົກລະດັບຈົບຊັ້ນປະຖົມສຶກສາ ບຳລຸງທົ່ວ ປະເທດຕໍ່ພິທີໂຮມຊຸມນຸມອັນມີຄວາມໝາຍ ຄວາມສຳຄັນນີ້ ຊຶ່ງມີເນື້ອໃນ ໂດຍຫຍໍ້ດັ່ງນີ້:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນໜຶ່ງໃນ 193 ປະເທດ ໃນໂລກ ທີ່ເປັນປະເທດເອກະລາດ ແລະ ເປັນສະມາຊິກຂອງສະຫະ ປະຊາຊາດ. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕັ້ງຢູ່ໃຈກາງ ຂອງບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ ປະກອບມີ 17 ແຂວງ ແລະ ມີ 1 ນະຄອນຫຼວງ, ມີເນື້ອທີ່ 236,800 ກິໂລຕາແມັດ, ມີພົນລະເມືອງປະມານ 6,809,054 ຄົນ/ເພດຍິງ 3,405,090 ຄົນ ແລະ ເພດຊາຍ 3,403,964 ຄົນ. ປະຊາກອນ ອາຍຸ 0-14 ປີ ມີ 2,514,287 ຄົນ, ອາຍຸ 15-44 ປີມີ 3,168,658 ຄົນ ແລະ 45 ປີຂຶ້ນໄປມີ 1,126,105 ຄົນ. ອັດຕາການເພີ່ມ ພົນລະເມືອງປະມານ 2% ຕໍ່ປີ. ພູມສັນຖານຂອງປະເທດສ່ວນຫຼາຍເປັນ ພູດອຍ ແຕ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ. ການຕັ້ງພູມ ລຳເນົາ ຂອງປະຊາຊົນບັນດາເຜົ່າຍັງກະແຈກກະຈາຍ, ການດຳລົງຊີວິດ ຍັງຂຶ້ນ ກັບທຳມະຊາດເປັນສ່ວນໃຫຍ່ ແລະ ການເຊື່ອຖືແບບຄອງເດີມຂອງ ບາງຊົນເຜົ່າບາງເຂດບວກໃສ່ຄວາມທຸກຍາກ ແລະ ລະດັບການສຶກສາຂອງ ປະຊາຊົນບັນດາເຜົ່າຍັງຕ່ຳ ເປັນອຸປະສັກຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດກໍຄືຕໍ່ການພັດທະນາການສຶກສາ ໂດຍສະເພາະການ ຈັດການຮຽນ-ການສອນການສຶກສານອກໂຮງຮຽນ ເປັນຕົ້ນການລຶບລ້າງ ຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາໃຫ້ປະຊາຊົນບັນດາເຜົ່າ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນປະເທດໜຶ່ງທີ່ມີການ ເຕີບໂຕໄວພໍສົມຄວນທາງດ້ານເສດຖະກິດມະຫາພາກ ທຽບໃສ່ບາງປະເທດ ໃນຂົງເຂດພາກພື້ນ, ໃນສົກປີ 2013-2014 ລວມຍອດຜະລິດຕະພັນ ພາຍໃນ ( GDP )ຂະຫຍາຍຕົວໃນລະດັບ 7.8%, ລວມຍອດຜະລິດຕະພັນ ຕໍ່ຫົວຄົນ (GDP)ລາຍໄດ້ຕໍ່ຫົວຄົນ 1,671 ໂດລາສະຫະລັດ. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຂົ້າເປັນສະມາຊິກຂອງ ອາຊຽນໃນ ປີ 1997, ເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ປີ 2013 ແລະ ຈະເຂົ້າເປັນ ປະຊາຄົມເສດຖະກິດອາຊຽນໃນທ້າຍປີ 2015 ນີ້.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີລະບົບການສຶກສາ ເປັນລະບົບ ເອກະພາບ ຊຶ່ງປະກອບ ດ້ວຍການ ສຶກສາໃນໂຮງຮຽນ ແລະ ການສຶກສານອກໂຮງຮຽນ ຄຽງຄູ່ກັນໄປ ທຸກຊັ້ນ, ທຸກຂັ້ນ ການສຶກສາ ຊຶ່ງມີ ເນື້ອໃນຫຼັກສູດ ແລະ ຖານະທຽບເທົ່າກັນ. ລະບົບການສຶກສາແຫ່ງຊາດ ແບ່ງເປັນຊັ້ນ ແລະ ຂັ້ນຮຽນຕ່າງໆນັບແຕ່ການສຶກສາກ່ອນໄວຮຽນເຖິງການ ສຶກສາຊັ້ນສູງ ແລະ ຖືເອົາການສຶກສາຊັ້ນປະຖົມສົມບູນ ເປັນການສຶກສາພາ ກບັງຄັບສຳລັບພົນລະເມືອງລາວບັນດາເຜົ່າທີ່ມີ ອາຍຸແຕ່ 6 ປີຂຶ້ນໄປ ຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ(ສະບັບປັບປຸງ 2007).

ກ່ອນປີ 1975 ປະເທດລາວແບ່ງເປັນສອງເຂດຄື: ເຂດປົດປ່ອຍແນວລາວ ຮັກຊາດ ແລະ ເຂດວຽງຈັນ, ການສຶກກໍແບ່ງເປັນສອງເຂດ ຄື: ການສຶກສາ ເຂດປົດປ່ອຍແນວລາວຮັກຊາດ ແລະ ການສຶກສາເຂດວຽງຈັນ. ສຳລັບການ ສຶກສາເຂດປົດປ່ອຍກໍມີການສຶກສາໃນໂຮງຮຽນ ແລະ ການສຶກສານອກ ໂຮງຮຽນ (ປະຊາສຶກສາ)ແຕ່ປະຊາຊົນບັນດາເຜົ່າມີໂອກາດໄດ້ຮັບການ ສຶກສາໜ້ອຍ ເພາະປະຊາຊົນສ່ວນຫຼາຍແມ່ນເຮັດໜ້າທີ່ການຕໍ່ສູ້ກັບພວກ ຈັກກະພັດຕ່າງຊາດເພື່ອປົດປ່ອຍປະເທດຊາດ. ພັກ ແລະ ອຳນາດການ ປົກຄອງ ປະຕິວັດ ກໍໄດ້ເອົາໃຈໃສ່ສ້າງເງື່ອນໄຂ ແລະ ປຸກລະດົມຂົນຂວາຍ ພະນັກງານ ແລະ ປະຊາຊົນບັນດາເຜົ່າຮຽນໜັງສື ເພື່ອໃຫ້ອ່ານໄດ້ ຂຽນເປັນ ຜ່ານການປຸກລະດົມຂົນຂວາຍ ແລະ

ຈັດຕັ້ງການຮຽນ- ການສອນປະຊາສຶກສາ ກໍ່ສາມາດ ສ້າງຕົວແບບທົດລອງການລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ພະນັກງານ ແລະ ປະຊາຊົນອາຍຸແຕ່ 15-45 ປີ ຢູ່ 3 ບ້ານແຂວງຫົວພັນ, 5 ບ້ານຢູ່ແຂວງ ຊຽງ ຂວາງໃນປີ 1967 ແລະ ວຽກງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍາລຸງ ວັດທະນະທໍາໄດ້ປົ່ງໜໍ່ຈໍ່ແໜງ ແລະ ຂະຫຍາຍຕົວຂຶ້ນເລື້ອຍໆ.



ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ໄດ້ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975, ພັກ ແລະ ລັດຖະບານໄດ້ໃຫ້ຄວາມສໍາຄັນ ແລະ ມີນະໂຍບາຍທີ່ຈະແຈ້ງ ຕໍ່ ວຽກງານການສຶກສາທັງໃນລະບົບ ແລະ ນອກລະບົບໂຮງຮຽນ ໂດຍສະເພາະ ແມ່ນວຽກງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍາລຸງ ວັດທະນະທໍາ ໃຫ້ຖັນແຖວ ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາ ເຜົ່າໃນທົ່ວປະເທດ ໃຫ້ມີລະດັບການສຶກສານັບມື້ນັບສູງຂຶ້ນ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ອອກຄໍາສັ່ງ ສະບັບເລກທີ 08/ນຍ, ລົງວັນທີ 14 ມັງກອນ 1976 ວ່າດ້ວຍ ການປັບປຸງ, ຂະຫຍາຍວຽກງານ ປະຊາ ສຶກສາ ແລະ ບໍາລຸງວັດທະນະທໍາ  ໃນນັ້ນໃຫ້ຮີບຮ້ອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍາລຸງວັດທະນະທໍາໃຫ້ ປະຊາຊົນບັນດາເຜົ່າໃນກຸ່ມອາຍຸ 15 - 45 ປີ. ໂດຍອີງໃສ່ຄໍາສັ່ງດັ່ງກ່າວ  ຂະແໜງການສຶກສາໄດ້ຈັດຕັ້ງຜັນຂະຫຍາຍ ຢ່າງມີແຜນການ ໂດຍການ ຈັດການຮຽນ - ການສອນລຶບລ້າງ ຄວາມບໍ່ຮູ້ ໜັງສື ແລະ ບໍາລຸງ ວັດທະນະທໍາ ຢ່າງເປັນ ຂະບວນ ຟົດຟື້ນ ແລະ ເປັນລະບົບຕໍ່ເນື່ອງ ມາຮອດ ວັນທີ 2 / 5 / 1979 ແຂວງຫົວພັນ ສາມາດປະກາດ ລຶບລ້າງຄວາມ ບໍ່ຮູ້ ໜັງສືທົ່ວແຂວງ ຊຶ່ງເປັນ ແຂວງທໍາອິດຂອງປະເທດ, ຈາກນັ້ນມາຮອດທ້າຍ ເດືອນ 12 ປີ 1984 ກໍ ສາມາດປະກາດລຶບລ້າງ ຄວາມບໍ່ຮູ້ ໜັງສືທົ່ວປະເທດ ຢ່າງເປັນທາງການ ປະກາດ ໂດຍພະນະທ່ານ ສຸພານຸວົງ, ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີຜູ້ຮຽນຈົບ ລຶບລ້າງຄວາມບໍ່ຮູ້ໜັງສືທັງໝົດ 755,768 ຄົນ.

ຫຼັງຈາກນັ້ນມາ ອີງໃສ່ສະພາບ ຄວາມເປັນຈິງ ນາຍົກລັດຖະມົນຕີ ໄດ້ອອກຄໍາສັ່ງສະບັບເລກທີ 62/ນຍ, ລົງວັນທີ 8 ສິງຫາ 1992 ວ່າດ້ວຍການສືບຕໍ່ແກ້ໄຂບັນຫາການລຶບລ້າງຄວາມບໍ່ຮູ້ໜັງສືຄືນໃໝ່ ເພື່ອໃຫ້ສໍາເລັດຄວາມບໍ່ຮູ້ ໜັງສື. ໂດຍປະຕິບັດຕາມຄໍາສັ່ງ ດັ່ງກ່າວ ຄະນະພັກ, ອໍານາດການປົກຄອງ ແຂວງ, ເມືອງ, ບ້ານ ແລະ ຂະແໜງ ການສຶກສາໃນຂອບເຂດທົ່ວປະເທດໄດ້ສືບຕໍ່ເປີດຂະບວນການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ແກ່ ປະຊາຊົນຜູ້ທີ່ຍັງກືກ ແລະ ກືກໜັງສືຄືນ ແລະ ໄປພ້ອມໆ ກັບຂະບວນການ ຈັດການຮຽນ-ການສອນບໍາລຸງຍົກລະດັບຊັ້ນປະຖົມຢ່າງກ້ວາງຂວາງ ແລະ ເປັນຂະບວນຟົດຟື້ນຕໍ່ເນື່ອງ ຕະຫຼອດມາ.

ກອງປະຊຸມສຶກສາໂລກຈັດຂຶ້ນທີ່ ຈອມທຽນ ປະເທດໄທ ໃນປີ 1990 ໄດ້ອອກມະຕິ ທຸກປະເທດໃນໂລກຕ້ອງ ສະໜອງຄວາມຕ້ອງການ ການສຶກສາຂັ້ນພື້ນຖານເພື່ອທຸກຄົນ.

ຈາກນັ້ນມາປີ 2000 ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບການສຶກສາ ທີ່ນະຄອນຫຼວງດັກກາ ປະເທດເຊເນການ ແລະ ໄດ້ປະກາດເປົ້າໝາຍ ຍຸດທະສາດການສຶກສາຊຶ່ງຮອດປີ 2015 ປະຊາກອນໃນ  ທົ່ວໂລກໃຫ້ມີ ລະດັບການສຶກສາຢ່າງຕໍ່າຕ້ອງຈົບຊັ້ນປະຖົມ. ເພື່ອບັນລຸ ເປົ້າໝາຍ ດັ່ງກ່າວ ຂະແໜງການສຶກສາໄດ້ວາງແຜນປະຕິບັດງານແຫ່ງຊາດ ການສຶກສາເພື່ອ ທຸກຄົນ 2003 - 2015 ແລະ ໄດ້ຮັບຮອງຈາກລັດຖະບານ ໃນຕົ້ນປີ 2005. ເນື້ອໃນຂອງແຜນປະຕິບັດງານດັ່ງກ່າວໄດ້ເຊື່ອມໂຍງເຂົ້າກັບເປົ້າໝາຍ ແລະ ຄາດໝາຍຂອງແຜນຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງ ຄວາມທຸກຍາກແຫ່ງຊາດ ແລະ ເປົ້າໝາຍສະຫັດສະຫວັດດ້ານການ ພັດທະນາໃນປີ 2015.

ເພື່ອບັນລຸເປົ້າໝາຍຂອງແຜນງານແຫ່ງຊາດການ ສຶກສາເພື່ອທຸກຄົນ ກໍຄືເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ກະຊວງສຶກສາທິການ ແລະ ກິລາ ໄດ້ວາງແຜນຍຸດທະສາດການປະຕິຮູບລະບົບການສຶກສາທັງໃນ ແລະ ນອກລະບົບໂຮງຮຽນ. ສໍາລັບການສຶກສານອກລະບົບໂຮງຮຽນໄດ້ສືບຕໍ່ປັບປຸງເນື້ອໃນຫຼັກສູດການຮຽນ-ການສອນຄືນໃໝ່, ປັບປຸງຮູບແບບ, ຂັ້ນຕອນ, ບາດກ້າວ ແລະ ວິທີການຮຽນ-ການສອນໃຫ້ເໝາະສົມກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ ແລະ ເໝາະສົມກັບວິຖີການດໍາລົງຊີວິດຂອງປະຊາຊົນບັນດາເຜົ່າ ໂດຍເອົາ "ການຮຽນໜັງສື ແລະ ບໍາລຸງຍົກລະດັບການສຶກສາຄວບຄູ່ກັບການອົບຮົມວິຊາຊີບຂັ້ນພື້ນຖານ ເຮັດໃຫ້ການຮຽນໜັງສື ແລະ ບໍາລຸງຍົກ ລະດັບການສຶກສາຕິດພັນກັບຜົນປະໂຫຍດ ແລະ ການຍົກລະດັບຄຸນນະພາບຊີວິດຂອງຜູ້ຮຽນໃຫ້ດີຂຶ້ນ" ໂດຍຈັດການຮຽນ-ການສອນຢູ່ຕາມສູນການ ຮຽນຮູ້ຊຸມຊົນ, ຕາມໂຮງຮຽນ ຫຼື ຕາມສະຖານທີ່ລວມຂອງບ້ານທີ່ເຫັນວ່າ ເໝາະສົມ ແລະ ຈັດຮຽນ ໃນວັນເສົາ ແລະ ວັນອາທິດ.

ໂດຍປະຕິບັດຕາມແຜນຍຸດທະສາດການ ປະຕິຮູບລະບົບການສຶກສາ ໂດຍສະເພາະແມ່ນການປະຕິຮູບການສຶກສານອກໂຮງຮຽນ, ຈຶ່ງໄດ້ສືບຕໍ່ ຈັດການຮຽນ-ການສອນບໍາລຸງຍົກລະດັບການ  ສຶກສາຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ປະຊາຊົນ ໂດຍອີງໃສ່ສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນ.

ດ້ວຍຄວາມຮັບຜິດຊອບຂອງ ຄະນະພັກ, ອໍານາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນທຸກພາກສ່ວນໃນສັງຄົມ ບວກໃສ່ ກັບຄວາມພະຍາຍາມ, ຄວາມຕັ້ງໃຈ, ຄວາມຢາກຮູ້, ຢາກຮຽນຂອງຜູ້ຮຽນ ແລະ ການສະໜັບສະໜູນດ້ານງົບປະມານຈາກລັດຖະບານ, ຈາກຄູ່ຮວມ ພັດທະນາການ, ອົງຈັດຕັ້ງສາກົນ ນັບທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.

ຜ່ານການຈັດຕັ້ງປະຕິບັດຂະບວນການຮຽນ-ການສອນດັ່ງກ່າວມາຂ້າງເທິງ ແລະ ຜ່ານການຕິດຕາມປະເມີນຜົນຕົວຈິງເຫັນວ່າປະຊາຊົນກຸ່ມເປົ້າໝາຍ ສາມາດຮຽນຈົບຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາວາງອອກ ແລະ

Education for Everyone. Worldwide. Lifelong.

ທຸກແຂວງ/ນະຄອນຫຼວງ ສາມາດຈັດພິທີປະກາດຈົບຊັ້ນປະຖົມສຶກສາບຳລຸງ ທົ່ວແຂວງຂອງຕົນ ຊຶ່ງນະຄອນຫຼວງວຽງຈັນໄດ້ປະກາດກ່ອນໝູ່ເປັນແຂວງທຳອິດຂອງປະເທດ ໄດ້ປະກາດເປັນທາງການໃນວັນທີ 3 / 6 / 2010, ປີ 2011 ແຂວງຈຳປາສັກ; ປີ 2012 ແຂວງຊຽງຂວາງ; ປີ 2013 ແຂວງອຸດົມໄຊ, ຫຼວງພະບາງ, ຫຼວງນ້ຳທາ, ບໍລິຄຳໄຊ, ໄຊຍະບູລີ, ບໍ່ແກ້ວ ແລະ ຫົວພັນ; ປີ 2014 ແຂວງສາລະວັນ, ອັດຕະປື, ຄຳມ່ວນ, ເຊກອງ, ສະຫວັນນະເຂດ, ວຽງຈັນ ແລະ ປີ 2015 ແຂວງຜົ້ງສາລີ ແລະ ແຂວງໄຊສົມບູນ ຊຶ່ງເປັນແຂວງສຸດທ້າຍໄດ້ຈັດພິທີປະກາດເປັນທາງການໃນວັນທີ 12 / 6 / 2015. ມາຮອດປະຈຸບັນນີ້ປະຊາກອນໃນເກນອາຍຸ 15 - 45ປີ ໄດ້ຈົບລຶບລ້າງ ຄວາມ ບໍ່ຮູ້ໜັງສື 942,018 ຄົນ/ຍິງ 527,898 ຄົນ/ຊາຍ 414,120 ຄົນ ແລະ ຈົບຊັ້ນ ປະຖົມບຳລຸງ 640,743 ຄົນ/ຍິງ 338,739 ຄົນ/ຊາຍ 302,004 ຄົນ.

ສະຫຼຸບລວມແລ້ວ ການຈັດຕັ້ງການຮຽນ-ການສອນບຳລຸງຍົກລະດັບການສຶກສາ ໃຫ້ປະຊາຊົນບັນດາເຜົ່າໃນກຸ່ມເປົ້າໝາຍເກນອາຍຸ 15 - 45 ປີ ໃຫ້ຈົບຊັ້ນປະຖົມສຶກສາ ໄດ້ມີຜົນສຳເລັດຕາມຄາດໝາຍ ແລະ ເວົ້າໄດ້ວ່າປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດໂດຍທົ່ວໄປມີລະດັບການສຶກສາຈົບຊັ້ນປະຖົມສຶກສາ ແລະ ຖືວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສາມາດ ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (ເປົ້າໝາຍທີ 2). ໄປຄຽງຄູ່ກັບການຈັດຕັ້ງການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຊັ້ນປະຖົມໃຫ້ປະຊາຊົນບັນດາເຜົ່າໃນກຸ່ມ ເປົ້າໝາຍ ທີ່ກ່າວມາ ນັ້ນແລ້ວ ພວກເຮົາຍັງໄດ້ສືບຕໍ່ຈັດຕັ້ງການຮຽນ-ການສອນ ບຳລຸງຍົກລະດັບຈົບຊັ້ນ ມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ ຢ່າງ ຕໍ່ເນື່ອງ ຊຶ່ງມາຮອດ ປະຈຸບັນນີ້ ມີ 45 ເມືອງໄດ້ປະກາດຈົບຊັ້ນມັດທະຍົມ ຕອນຕົ້ນ ທົ່ວເມືອງ ແລະ ມີ 1 ແຂວງ(ແຂວງໄຊຍະບູລີ) ໄດ້ປະກາດຈົບຊັ້ນມັດທະຍົມ ຕອນຕົ້ນທົ່ວແຂວງ ໄດ້ປະກາດເປັນທາງການໃນວັນທີ  27 / 2 / 2015 ຊຶ່ງເປັນແຂວງທຳອິດຂອງປະເທດ.

ຮຽນ ບັນດາທ່ານທີ່ນັບຖື

ໂດຍອີງໃສ່ທ່າອ່ຽງລວມຂອງການພັດທະນາໃນຕໍ່ໜ້າດ້ວຍເງື່ອນໄຂໃໝ່ ຊຶ່ງການ ພັດທະນາຫຼັງປີ 2015 ຈະພັດທະນາຕາມທິດແບບຍືນຍົງ ແລະ ການຮຽນຮູ້ຕະຫຼອດຊີວິດ. ສະນັ້ນ ສປປ ລາວ ພວກເຮົາຈະໄດ້ສືບຕໍ່ ພັດທະນາການສຶກສາຕາມທິດແບບຍືນຍົງ ແລະ ການຮຽນຮູ້ຕະຫຼອດຊີວິດ ໂດຍເລັ່ງໃສ່ຍົກລະດັບການສຶກສາ ໃຫ້ພົນລະເມືອງລາວທຸກຄົນຈົບ ການສຶກສາພາກບັງຄັບ 9 ປີຮຽນ ດ້ວຍການຈັດ ການຮຽນ-ການສອນ ການບຳລຸງຍົກລະດັບໃຫ້ ປະຊາຊົນໃນຮູບແບບ ການສຶກສານອກໂຮງຮຽນເປັນປົກກະຕິ ໂດຍການ ເກັບເລມຜູ້ທີ່ຕົກຫຼົ່ນທີ່ບໍ່ຈົບຊັ້ນປະຖົມໃຫ້ຈົບຊັ້ນປະຖົມ ແລ້ວສືບຕໍ່ບຳລຸງ ໃຫ້ຈົບຊັ້ນມັດທະຍົມ ແລະ ສູງກ່ວານັ້ນ. ສອນໃຫ້ຜູ້ຮຽນມີຄວາມຮູ້ ຕິດພັນກັບການຮຽນຮູ້ ໃຫ້ມີວິຊາຊີບໃດໜຶ່ງທີ່ໝັ້ນຄົງ, ນຳເອົາຄວາມຮູ້ນັ້ນ ໄປພັດທະນາຄຸນນະພາບຊີວິດຂອງເຂົາເຈົ້າໃຫ້ດີຂຶ້ນ, ນຳເອົາຄວາມຮູ້ນັ້ນໄປພັດທະນາ ເສດຖະກິດ-ສັງຄົມຂອງຊາດ ໃຫ້ຈະເລີນກ້າວໜ້າ ຂຶ້ນເລື້ອຍໆ. ສິ່ງທີ່ຂ້າພະເຈົ້າກ່າວມານັ້ນແມ່ນຜົນສຳເລັດ ໂດຍພື້ນຖານຂອງ ການຈັດການຮຽນ-ການສອນ ບຳລຸງຍົກລະດັບຈົບຊັ້ນປະຖົມ ທົ່ວປະເທດ ແລະ ການສືບຕໍ່ບຳລຸງ ຍົກລະດັບການສຶກສາ ໃຫ້ປະຊາຊົນບັນດາເຜົ່າໃນຕໍ່ໜ້າ.

ບັນດາທ່ານຜູ້ມີກຽດ, ທ່ານຍິງ ທ່ານຊາຍ ທີ່ນັບຖື ແລະ ຮັກແພງ. ໃນພິທີອັນສະຫງ່າລາສີນີ້ ຂ້າພະເຈົ້າ ຕາງໜ້າ ໃຫ້ການນຳຂະແໜງການສຶກສາ ແລະ ກິລາ ຂໍສະແດງຄວາມຂອບອົກ ຂອບໃຈ ແລະ ຮູ້ບຸນຄຸນມາຍັງ ພັກ ແລະ ລັດຖະບານ ທີ່ໄດ້ເອົາໃຈໃສ່ຊີ້ນຳພັດທະນາການສຶກສາ ໃຫ້ມີຄວາມກ້າວໜ້າ, ຂໍສະແດງຄວາມຂອບໃຈມາຍັງອົງການຈັດຕັ້ງຂອງລັດ ແລະ ສັງຄົມ ແລະ ສ່ວນບຸກຄົນ; ອົງການຈັດຕັ້ງ ສາກົນ ແລະ ຄູ່ຮ່ວມພັດທະນາທັງຫຼາຍ ທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອພັດທະນາ ການສຶກສາ ແລະ ຫວັງວ່າຈະໄດ້ຮັບການຮ່ວມມື ແລະ ຊ່ວຍເຫຼືອໃນຂັ້ນຕໍ່ໄປຕື່ມອີກ.

ຂ້າພະເຈົ້າ ຂໍຈົບການລາຍງານພຽງເທົ່ານີ້ (ຂໍຂອບໃຈ)



Education for Everyone. Worldwide. Lifelong.

# ກອງປະຊຸມປຶກສາຫາລື ແຫ່ງຊາດ ກ່ຽວກັບການສ້າງຄວາມເຂັ້ມແຂງໃນການດຳເນີນງານ ແລະ ຄວາມສາມາດຂອງບັນດາສູນຮຽນຮູ້ຊຸມຊົນ ໃນປະເທດກຳປູເຈຍ

*ໄລ ວູຕາ, ຜູ້ປະສານງານການສຶກສານອກໂຮງຮຽນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດເພື່ອການຮ່ວມມືດ້ານການສຶກສາ*
*ກາຕາ ໂຟດໍ, ພະນັກງານຝຶກຫັດ, ຫ້ອງການ ດີວີວີ ອິນເຕີເນເຊິນແນວ, ພາກພື້ນອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້*

ດ້ວຍການຊ່ວຍເຫຼືອຂອງອົງການຮ່ວມມືນາໆຊາດເພື່ອການສຶກສາຜູ້ໃຫຍ່ຂອງເຢຍລະມັນ (ດີວີວີ ອິນເຕີເນເຊີແນວ), (NEP) ອົງການຈັດຕັ້ງທີ່ບໍ່ສັງກັດລັດຂອງກຳປູເຈຍເພື່ອການຮ່ວມມືດ້ານການສຶກສາໄດ້ຈັດກອງປະຊຸມປຶກສາຫາລືລະດັບຊາດກ່ຽວກັບການສ້າງຄວາມເຂັ້ມແຂງໃນການດຳເນີນງານຂອງບັນດາສູນຮຽນຮູ້ຊຸມຊົນ (CLC) ເພື່ອສົ່ງເສີມການຮຽນຮູ້ຕະຫຼອດຊີວິດ(LLL) ແລະ ການພັດທະນາການສຶກສາແບບຍືນຍົງ(ESD) ໃນລະຫວ່າງ ວັນທີ 4 - 5 ມິຖຸນາ 2015 ທີ່ແຂວງ ກຳປົງທົມ. ຈຸດປະສົງຫຼັກຂອງກອງປະຊຸມແມ່ນ: (1) ເພື່ອກຳນົດຍຸດທະສາດການປະຕິບັດງານຂອງ ສູນຮຽນຮູ້ຊຸມຊົນແບບຍືນຍົງ ແລະການພັດທະນາ ໂດຍສະເພາະ ເລັ່ງໃສ່ການດຳເນີນງານ, ການເຂົ້າ ເຖິງ, ແລະ ການມີສ່ວນຮ່ວມຂອງ ຊຸມຊົນ ເພື່ອສົ່ງເສີມການ ຮຽນຮູ້ຕະຫຼອດຊີວິດ ແລະ ການພັດທະນາ ການສຶກສາແບບຍືນຍົງ. (2)ເພື່ອລົງເລິກຄວາມຮູ້ ຄວາມເຂົ້າໃຈໃນການ ປະຕິບັດຕົວຈິງຂອງການ ດຳເນີນງານຂອງສູນຮຽນ ຮູ້ຊຸມຊົນຂອງສະມາຄົມອາສາສະໝັກສັນຕິ (SVA) ແລະ (3) ເພື່ອປະກອບສ່ວນໃນການກະຕຸກຊຸກຍູ້ໃນ ການກຳນົດນະໂຍບາຍຂອງ ສູນຮຽນຮູ້ຊຸມຊົນ ແລະ ການພັດທະນາມາດຖານຂອງສູນຮຽນຮູ້ຊຸມຊົນໃນປະຈຸບັນ ທີ່ປະເທດກຳປູເຈຍ.



ຜູ້ເຂົ້າຮ່ວມກອງປະຊຸມ ປຶກສາຫາລືລະດັບຊາດ ກ່ຽວກັບສູນຮຽນຮູ້ຊຸມຊົນ ໃນປະເທດກຳປູເຈຍ

ພາກທຳອິດຂອງກອງປະຊຸມໄດ້ຈັດຂຶ້ນທີ່ຫ້ອງການວັດທະນາທຳ ຂອງແຂວງກຳປົງທົມ ໂດຍມີຜູ້ຕາງໜ້າ ຫຼາຍກວ່າ 30 ອົງການ ທີ່ເປັນສະມາຊິກຂອງອົງການ NEP ໄດ້ເຂົ້າຮ່ວມ. ການປຶກສາຫາລື. ໄດ້ກ່າວເປີດ ແລະ ເປັນປະທານໂດຍທ່ານ ຢັບ ພານໄຊ (Mr. Yeav Phalsay) ຜູ້ຕາງໜ້າຂອງກົມສຶກສານອກ ໂຮງຮຽນ, ກະຊວງສຶກສາທິການ ຊາວໜຸ່ມ ແລະ ກິລາ ຂອງ ກຳປູເຈຍ (MoEYS), ທ່ານ ຈິນ ຈັນວິສນາ, ຜູ້ອຳນວຍການໃຫຍ່ ຂອງ NEP, ແລະ ທ່ານ ອູເວີ ກາເທີນສະແລັກເກີ, ຜູ້ອຳນວຍການ ປະຈຳພາກພື້ນ ຂອງ ດີວີວີ ອິນເຕີເນເຊີແນວ. ການນຳສະເໜີຂອງທ່ານປະທານໄດ້ກວມເອົາຂໍ້ມູນທີ່ສຳຄັນໃນຄວາມຄືບໜ້າ ແລະ ສິ່ງທີ່ທ້າທາຍຂອງການປະຕິບັດນະໂຍບາຍ ດ້ານການສຶກສານອກໂຮງຮຽນທີ່ປະເທດກຳປູເຈຍ, ຂະບວນການຂອງການເບີກຈ່າຍ ດ້ານການເງິນ ສຳລັບບັນດາສູນຮຽນຮູ້ຊຸມຊົນ, ຄວາມທ້າທາຍ ແລະ ຂໍ້ແນະນຳສຳລັບການປັບປຸງ ແລະ ໃຫ້ຕົວຢ່າງ ການສຶກສາຂອງ ຍຸດທະສາດການປະຕິບັດນະໂຍບາຍຂອງບັນດາສູນຮຽນຮູ້ຊຸມຊົນ ແລະ ການປະຕິບັດຕົວຈິງທີ່ດີຈາກເອີຣົບ. ໄດ້ຂໍໃຫ້ຜູ້ເຂົ້າຮ່ວມຮວບຮວມເອົາຜົນໄດ້ຮັບຂອງ ກອງປະຊຸມໄປ ຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ ເຂົ້າໃນການພັດທະນາຊຸມຊົນ ແລະ ການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ, ເລັ່ງໃສ່ການປະຕິບັດໃນວາລະການຖອດຖອນບົດຮຽນ ແລະ ການມີສ່ວນຮ່ວມແບບທາວທັນ.

ໃນກອງປະຊຸມແມ່ນໄດ້ເນັ້ນໃຫ້ເຫັນຈຸດດີຈຳນວນໜຶ່ງທີ່ເຫັນວ່າສຳຄັນທີ່ສຸດຂອງການປະຕິບັດງານຂອງບັນດາສູນຮຽນຮູ້ຊຸມຊົນ. ສູນຮຽນຮູ້ຊຸມຊົນແມ່ນມີຄວາມສາມາດໃນການບໍລິການໃນຫຼາຍຮູບແບບ ພາຍນອກຂະແໜງການສຶກສາສາຍສາມັນ (ລວມເຖິງຊຸມຊົນໂດດດ່ຽວ ແລະ ຊຸມຊົນສ່ວນນ້ອຍ). ເຂົາເຈົ້າສາມາດຊ່ວຍໃນການພັດທະນາທ້ອງຖິ່ນໂດຍການປະຈັດຄາໃຊ້ຈ່າຍ ແລະ ປ່ຽນແປງໄປຕາມຄວາມເໝາະສົມພໍທີ່ຈະປັບຕົວເຂົ້າກັບສະຖານະການຕ່າງໆ ກ່ຽວກັບຫຼັກສູດ, ວິທີການນຳໃຊ້, ຕາຕະລາງເວລາ ແລະ ກຸ່ມເປົ້າໝາຍສະເພາະ. ໃນອີກດ້ານໜຶ່ງ ກອງປະຊຸມປຶກສາຫາລືດັ່ງກ່າວໄດ້ປະກອບສ່ວນອັນສຳຄັນໃນການຍົກໃຫ້ເຫັນເຖິງສິ່ງທ້າທາຍທີ່ສຳຄັນທີ່ໄດ້ປົກປ້ອງ ສູນຮຽນຮູ້ຊຸມຊົນສ່ວນໃຫຍ່ ທີ່ໄດ້ສ້າງຂຶ້ນຢ່າງມີປະສິດທິພາບໃນປະເທດກຳປູເຈຍ. ອິດສະຫຼະ ແລະ ຄວາມຍືນຍົງດ້ານການເງິນແມ່ນນອນຢູ່ໃນບັນດາຄວາມຫຍຸ້ງຍາກທີ່ໄດ້ຍົກຂຶ້ນມາ. ກໍລະນີສຶກສາທີ່ນຳສະເໜີ ອີງຕາມການສຳພາດ 23 ສູນຮຽນຮູ້ຊຸມຊົນຈາກ 5 ແຂວງ ສະແດງ ໃຫ້ເຫັນວ່າ 76% ຂອງສູນຮຽນຮູ້ຊຸມຊົນ ທີ່ກວດສອບແມ່ນບໍ່ມີການວາງແຜນໃດ ໜຶ່ງກ່ຽວກັບງົບປະມານປະຈຳປີຂອງເຂົາເຈົ້າ ເຊັ່ນດຽວກັນກັບທີ່ເຂົາເຈົ້າບໍ່ໄດ້ສົ່ງແຜນການເງິນ ຫຼື ແຜນກິດຈະກຳໃຫ້ທາງໜ່ວຍງານຂອງແຂວງ. ນີ້ສະແດງໃຫ້ເຫັນເຖິງ ຄວາມບໍ່ຈະແຈ້ງ ຂອງວິທີການຈາກຂັ້ນລຸ່ມຫາຂັ້ນເທິງໃນການວາງແຜນ, ສິ່ງຜົນໃຫ້ CLCs ລໍຖ້າວ່າໜ່ວຍງານແຫ່ງຊາດຈະຈັດສັນງົບປະມານ ແລະ ສົ່ງໃຫ້ເຂົາໂດຍກົງ. ໃນອີກດ້ານໜຶ່ງ, ຜູ້ນຳພາ ແລະ ຜູ້ບໍລິຫານຊຸມຊົນ ຫຼາຍຄັ້ງໄດ້ລາຍງານຂໍ້ມູນບໍ່ພຽງພໍກ່ຽວ ກັບຄວາມເປັນໄປໄດ້ຂອງການຄາດຄະເນ ງົບປະມານໃຫ້ກິດຈະກຳຂອງສູນຮຽນຮູ້ຊຸມຊົນ, ໃນເມື່ອບໍ່ມີສິ່ງດັ່ງກ່າວການອອກແບບ ແຜນການຕົວຈິງກໍຈະມີຄວາມຄວາມຫຍຸ້ງຍາກ.

ໄດ້ມີຄຳແນະນຳໃຫ້ສ້າງຄວາມເຂັ້ມແຂງດ້ານບົດບາດ ແລະ ຄວາມາດສາມາດຂອງຜູ້ບໍລິຫານ CLCs ໃນການວາງແຜນ ແລະ ຈັດສັນງົບປະມານປະຈຳປີເພື່ອສູນ ແລະ ພະນັກງານຂອງເຂົາເຈົ້າ (ລວມເຖິງຄູຝຶກທີ່ຈ້າງມາ). ຂັ້ນເມືອງ(ສຶກສາເມືອງ) ແລະ ໜ່ວຍງານຂັ້ນແຂວງ (ສຶກສາແຂວງ) ມີບົດບາດສຳຄັນໃນການສ້າງຄວາມອາດສາມາດຂອງຜູ້ບໍລິຫານເຫຼົ່ານີ້ ແລະ ໃນການຮັບປະກັນຄຸນນະພາບຂອງວຽກງານຂອງເຂົາເຈົ້າ. ເຊັ່ນດຽວກັນເຂົາເຈົ້າຄວນໝັ້ນໃຈວ່າການຈັດຊື້ອຸປະກອນທີ່ແຕກຕ່າງກັນແມ່ນໄດ້ຖືກລົບລ້າງໃນລະດັບຊາດ ແລະ ລະດັບແຂວງ, ເຊິ່ງບັນດາ CLCs ແມ່ນມີຄວາມຕ້ອງການທີ່ແຕກຕ່າງກັນໃນເລື່ອງຂອງຄູຝຶກ, ອຸປະກອນສິດສອນ, ເຄື່ອງຈັກ ແລະ ສິ່ງອຳນວຍຄວາມສະດວກອື່ນໆ. ຄວາມຕ້ອງການ ແລະ ການປະເມີນຜົນທາງດ້ານການເງິນ ຄວນມາຈາກຂັ້ນຊຸມຊົນ. ບົດນຳສະເໜີໄດ້ຈັດເປັນສາມກຸ່ມນ້ອຍເພື່ອສົນທະນາກ່ຽວກັບລາຍລະອຽດ ຂອງສິ່ງທ້າທາຍດັ່ງກ່າວ ແລະ ໃຫ້ລົງເລິກຄຳແນະນຳ

Education for Everyone. Worldwide.
Lifelong.

ເພື່ອການປະຕິບັດງານໃນອະນາຄົດ.

ການສົນທະນາແບບເປີດກ້ວາງກ່ຽວກັບສິ່ງທ້າທາຍ ແລະ ໂອກາດ ຕໍ່ມາແມ່ນບົດນຳສະເໜີກ່ຽວກັບແຕ່ລະກໍລະນີສຶກສາ ແລະ ໂຄງການ. ສາມອົງກອນໄດ້ຖອດຖອນບົດຮຽນ ແລະ ພາກປະຕິບັດຕົວຈິງທີ່ໄດ້ຮັບຜົນດີໃນການດຳເນີນງານຂອງ CLC: ສະມາຄົມອາສາສະໝັກສັນຕິ (SVA), ອົງການຈັດຕັ້ງບໍ່ສັງກັດລັດເພື່ອນມິດສາກົນ, ແລະ ອົງການສູພານິມິດ-ກຳປູເຈຍ. ໄດ້ມີການຖົກຖຽງກ່ຽວກັບຄວາມຍືນຍົງຂອງສູນຮຽນຮູ້ຊຸມຊົນໂດຍອີງຕາມການສ້າງກຳລັງແຮງຂອງບຸກຄົນ, ໝາຍຄວາມວ່າເຊັ່ນໃນການໃຫ້ການຊຸກຍູ້ສະມາຊິກຂອງຊຸມຊົນເພື່ອສ້າງຄວາມອາດສາມາດໃຫ້ຕົນເອງ, ພອນສະຫວັນ ແລະ ກຳລັງແຮງເພື່ອສ້າງການປ່ຽນແປງຂອງສັງຄົມປາດສະຈາກຄວາມຊ່ວຍເຫຼືອແບບຕໍ່ເນື່ອງຈາກພາຍນອກ. ນີ້ເຫັນວ່າເປັນພື້ນຖານທີ່ສຳຄັນສຳລັບຄວາມຍືນຍົງທາງດ້ານການເງິນຂອງ CLCs.

ອົງການເພື່ອນມິດສາກົນເຮັດວຽກໂດຍສ່ວນໃຫຍ່ກັບຊາວໜຸ່ມໃນຕົວເມືອງທີ່ຍົກຍ້າຍມາຈາກຊົນນະບົດເພື່ອທີ່ຈະໄດ້ຮັບໂອກາດທີ່ດີໃນການຊ່ວຍເຫຼືອຄອບຄົວຂອງເຂົາເຈົ້າ ແຕ່ວ່າທ້າຍສຸດແລ້ວພັດຕົກເປັນຄົນຫວ່າງງານ  ແລະ ກາຍເປັນຄວາມສ່ຽງທີ່ຈະໃຊ້ຄວາມຮຸນແຮງ ແລະ ຢາເສບຕິດ. ສິ່ງທີ່ສຳຄັນທີ່ໄດ້ຈາກປະສົບປະການຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດແມ່ນວິທີການນຳໃຊ້ວິທີການແກ້ໄຂບັນຫາຂອງຊາວໜຸ່ມດັ່ງກ່າວ, ໂດຍການເຮັດວຽກໂດຍກົງກັບຄອບຄົວ ແລະ ຊຸມຊົນ ຂອງເຂົາເຈົ້າ ແລະ ຊ່ວຍໃຫ້ເຂົາເຈົ້າໄດ້ຮັບຊີວິດ ແລະ ທັກສະໃນການເຮັດວຽກ ເພື່ອຈະໄດ້ກາຍເປັນສ່ວນໜຶ່ງທີ່ມີ ປະໂຫຍດຂອງສັງຄົມອີກເທື່ອໜຶ່ງ. ອົງການສູພານິມິດ-ກຳປູເຈຍ ໄດ້ນຳສະເໜີແຕ່ລະຕົວຢ່າງຂອງວິທີການທີ່ຊາວ ກະສິກອນ ແລະ ຜູ້ລ້ຽງໄກ່ທີ່ໄດ້ຮັບການສຶກສາ ແລະ ກາຍມາເປັນຜູ້ປ່ຽນແປງໃນຊຸມຊົນໂດຍການນຳໃຊ້ກະສິກຳແບບ ອິນຊີ ແລະ ນຳໃຊ້ນະວັດທະກຳໃໝ່ທີ່ສາມາດປ້ອງກັນການສູນເສຍສັດລ້ຽງຂອງເຂົາເຈົ້າໄດ້. ຕົວຢ່າງດັ່ງກ່າວໄດ້ຍົກ ໃຫ້ເຫັນຜົນກະທົບຢ່າງແຮງຂອງການສຶກສາບໍ່ພຽງແຕ່ຕໍ່ບຸກຄົນເທົ່ານັ້ນ ແຕ່ຕໍ່ຊຸມຊົນຂະໜາດໃຫຍ່ເຊັ່ນດຽວກັນ.

ໃນລະຫວ່າງກອງປະຊຸມ, ສະມາຄົມອາສາສະໝັກສັນຕິ (SVA) ບໍ່ພຽງແຕ່ນຳສະເໜີພາກປະຕິບັດຕົວຈິງ ແລະ ປະສົບປະການຂອງເຂົາເຈົ້າ ກ່ຽວກັບການບໍລິຫານ CLCs ຢູ່ທີ່ເມືອງກຳປົງສະເວ (Kampong Svay District), SVA ໄດ້ສຸມໃສ່ໂດຍສະເພາະການຮຽນຮູ້ໜັງສື, ຫໍສະໝຸດ ປະເພດຂອງການສຶກສາດ້ານສັງຄົມ ແລະການຝຶກອົບຮົມຄູຝຶກຢູ່ໃນຊຸມຊົນຕ່າງໆ. ຕົວຢ່າງ, ໃນຕອນເລີ່ມຕົ້ນຂອງໂຄງການ ໄດ້ເຊີນຊ່ຽວຊານຝຶກອົບຮົມ ມາສອນຊາວກະສິກອນອາສາສະໝັກກ່ຽວກັບການປະຕິບັດຕົວຈິງກະເສດອິນຊີ ແລະ ກະສິກຳແບບຍືນຍົງ. ຈາກນັ້ນ, ຫຼັງຈາກກັບມາແລ້ວເຂົາເຈົ້າຈະຕ້ອງໄດ້ສອນ ບັນດາສະຫາຍຊາວກະສິກອນ ແລະ ຊຸມຊົນອື່ນໆຂອງເຂົາເຈົ້າ ເພື່ອສ້າງຕັ້ງ ແລະ ຜັນຂະຫຍາຍການປະຕິບັດຕົວຈິງທີ່ຖືກຕ້ອງ. ຊາວກະສິກອນດັ່ງກ່າວ ຈະບໍ່ໄດ້ຈ່າຍເງິນສຳລັບກິດຈະກຳນີ້, ມັນເປັນການຍົກລະດັບທາງສັງຄົມຂອງເຂົາເຈົ້າທີ່ທາງໂຄງການພະຍາຍາມສ້າງຂຶ້ນ, ໃນຄະນະດຽວກັນກໍເໜັ້ນໜັກເຖິງຄວາມສຳຄັນຂອງການສະແຫວງຫາແບບສະໝັກໃຈ ແລະ ມີແຮງຈູງໃຈຂອງຕົນເອງໃນການສ້າງທັກສະ ແລະຄວາມຮູ້ໃໝ່ໆ.

ຫ້ອງຮຽນໜັງສື ແລະ ຫ້ອງສະໝຸດຂອງ SVA  ແມ່ນເລັງໃສ່ຂັ້ນຕົ້ນ ໃນບັນຫາ ແລະ ຫົວຂໍ້ ທີ່ກ່ຽວຂ້ອງກັບຊີວິດປະຈຳວັນຂອງຊາວບ້ານ ເຊັ່ນ: ສຸຂະພາບຂອງແມ່, ບັນດາພະຍາດທີ່ມາກັບນ້ຳ, ການຈັດການ ແລະ ທຳລາຍສິ່ງເສດເຫຼືອ ແລະ ເລື່ອງການສຶກສາ. ຜູ້ເຂົ້າຮ່ວມປະຊຸມໄດ້ໃຊ້ໂອກາດນີ້ເຂົ້າຊົມວຽກງານໃນຊີວິດຈິງໃນ CLC ແຫ່ງໜຶ່ງ ແລະ ມີສ່ວນຮ່ວມກັບ ຊຸມຊົນທ້ອງຖິ່ນ. ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ໄປຢ້ຽມຢາມຫ້ອງຮຽນໜັງສືພາກຄ່ຳ, ຊຸດຝຶກອົມຮົບຊາວກະສິກອນ, ການແຂ່ງຂັນກິລາ, ເຊັ່ນດຽວກັບການສັງເກດ ການຫໍສະໝຸດຂອງສູນຮຽນຮູ້ຊຸມຊົນໃນໄລຍະ “ຊົ່ວໂມງຮີບດ່ວນ”, ໃນເວລາທີ່ເດັກນ້ອຍຫຼາຍໆຄົນ ແລະ ແມ່ຂອງເຂົາເຈົ້າກຳລັງອ່ານ ແລະ ໂອລົມກັນຢູ່ໃນຮົ່ມເງົາຂອງເຮືອນ ແລະ ຢູ່ເທິງຊານດ້ານນອກ.

ສູນຮຽນຮູ້ຊຸມຊົນນີ້ ໄດ້ເປັນຕົວຢ່າງທີ່ດີໃນການມີສ່ວນຮ່ວມຂອງຜູ້ສ້າງຕັ້ງສູນດັ່ງກ່າວ ບໍ່ພຽງແຕ່ເອົາໃຈໃສ່ກັບໂຄງສ້າງພາຍນອກແຕ່ຍັງສ້າງຂຶ້ນດ້ວຍຄວາມມ່ວນຊື່ນ, ເປັນຈຸດນັດພົບທາງສັງຄົມ, ເປັນບ່ອນຮຽນຮູ້ ແລະ ພົວພັນເຊິ່ງກັນ ແລະ ກັນ. ໂດຍລວມແລ້ວ, ຂໍ້ສະຫຼຸບທີ່ໄດ້ມາຈາກບັນດາໂຄງການນຳສະເໜີ ເຊິ່ງລວມມີຄວາມຕ້ອງການທີ່ຈະສ້າງແຜນຕົວຈິງ ແລະ ປ່ຽນແປງຕາມຄວາມເໝາະສົມໂດຍເອົາໃຈໃສ່ໂຄງສ້າງ ແລະ ການເຄື່ອນໄຫວຂອງສູນຮຽນຮູ້ຊຸມຊົນທີ່ສາມາດເປັນສະຖານທີ່ນຳໃຊ້ໃຫ້ເປັນປະໂຫຍດ ແລະ ມີຄວາມສະດວກສະບາຍ, ເປັນບ່ອນທີ່ສາມາດຮຽນໄດ້ ໂດຍ “ກະທຳ” ສິ່ງໃດສິ່ງໜຶ່ງ. ມັນມີຄວາມສຳຄັນໃນການປູກຈິດສຳນຶກຄວາມເປັນເຈົ້າການຄອບຄອງສູນ ຈາກຈຸດເລີ່ມຕົ້ນຂອງຂະບວນການສ້າງແຜນ. ສ້າງຂີດຄວາມອາດສາມາດໃນທີ່ນີ້ໝາຍເຖິງການຊ່ວຍເຫຼືອໃນຊຸມຊົນໃຫ້ຮັບຮູ້ເຖິງສິ່ງທ້າທາຍຂອງພວກເຂົາເຈົ້າ ເຊັ່ນດຽວກັນກັບສ້າງຄວາມເຂັ້ມແຂງ ແລະ ຄວາມຕ້ອງການທີ່ແທ້ຈິງ ທີ່ສາມາດສອນວິທີໃຊ້ປະໂຫຍດຈາກແຫຼ່ງຊັບພະຍາກອນ ແລະ ທຶນຊ່ວຍເຫຼືອຈາກພາຍນອກທີ່ມີໃຫ້ພວກເຂົາເຈົ້າ ແລະ ວິທີການເຮັດໃຫ້ແຫຼ່ງຊັບພະຍາກອນດັ່ງເປັນສ່ວນໜຶ່ງທີ່ຍືນຍົງຂອງການເຄື່ອນໄຫວຂອງຊຸມຊົນຂອງເຂົາເຈົ້າ.

ເວົ້າໂດຍລວມ, ກອງປະຊຸມປຶກສາຫາລືລະດັບຊາດເປັນໂອກາດໜຶ່ງທີ່ດີເລີດສຳລັບບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດ ໃນຫຼາຍປະເພດທີ່ແຕກຕ່າງກັນ ເພື່ອຮຽນຮູ້ຈາກປະສົບການຂອງກັນ ແລະ ກັນ ແລະ ວາງແຜນຂັ້ນຕໍ່ໄປສຳລັບການສ້າງຄວາມເຂັ້ມແຂງໃຫ້ວຽກງານຂອງເຂົາເຈົ້າຢູ່ໃນຊຸມຊົນ ເຊັ່ນດຽວກັນກັບຜົນກະທົບຂອງການກຳນົດນະໂຍບາຍຂອງສູນຮຽນຮູ້ຊຸມຊົນ ແລະ ການພັດທະນາມາດຕະຖານໃນລະດັບຊາດ.



ຫ້ອງຮຽນໜັງສືຕອນແລງຂອງໜຶ່ງໃນຊຸມຊົນທີ່ທຸກຍາກທີ່ສຸດຂອງກຳປູເຈຍ. CLC ປະກອບອຸປະກອນໄຟຟ້າແບບມືຖືທີ່ໃຊ້ພະລັງງານແສງຕາເວັນ ຈຶ່ງສາມາດອ່ານ ແລະ ຮຽນໃນຕອນຄ່ຳໄດ້.

# ການເຮັດວຽກ ແລະ ດຳລົງຊີວິດ ຢູ່ ສປປ ລາວ: ຈາກປະສົບການຂອງ ກາຕາ ໂຟດ໌ ນັກສຶກສາຝຶກຫັດ

ຂ້າພະເຈົ້າມາເຖິງປະເທດລາວ ໃນເດືອນ ພຶດສະພາ 2015 ເພື່ອມາເຮັດວຽກໃນຖານະຂອງນັກສຶກສາ ຝຶກງານ ທີ່ ຫ້ອງການ ດີວີວີ ອິນເຕີເນເຊິນແນວ ເປັນເວລາ ສາມເດືອນ. ເບິ່ງແລ້ວຄືວ່າເປັນເວລາອັນສັ້ນໆ ແຕ່ຂ້າພະເຈົ້າກໍໄດ້ຄົ້ນພົບຫຼາຍສິ່ງຫຼາຍຢ່າງ ແລະ ໄດ້ມີໂອກາດໄດ້ຮັບຮູ້ຢ່າງເລິກເຊິ່ງເຖິງຄວາມໝາຍຄວາມສຳຄັນຂອງການ ພັດທະນາ ແລະ ການສຶກສາຢູ່ໃນຂົງເຂດດັ່ງກ່າວ. ນັບຕັ້ງແຕ່ຫ້ອງການ ດີວີວີ ອິນເຕີເນເຊິນແນວ ໄດ້ເຮັດວຽກໃນທຸກລະດັບ ເຊັ່ນ ລະດັບມະຫາພາກ, ລະດັບກາງ ແລະ ລະດັບຈຸລະພາກມັນໄດ້ເປີດໂອກາດຫຼາຍໆຢ່າງໃນການເຂົ້າຮ່ວມ ໃນຂະບວນການກິດຈະກຳ ບໍ່ວ່າ ຈາກຂັ້ນເທິງຫາຂັ້ນລຸ່ມ ແລະ ຈາກຂັ້ນລຸ່ມຫາຂັ້ນເທິງ, ໃນການພັດທະນາຄວາມເຂົ້າໃຈຂອງສິ່ງທ້າທາຍ ແລະ ໂອກາດຕ່າງໆທີ່ກ່ຽວຂ້ອງ. ໃນບົດລາຍງານນີ້ ຂ້າພະເຈົ້າຕ້ອງການຢາກໄຈ້ແຍກ ໃຫ້ເຫັນກ່ຽວກັບບາງປະສົບການ ທີ່ເຮັດໃຫ້ການເຮັດວຽກງານຂອງຂ້າພະເຈົ້າ ໃນປະເທດລາວເປັນນາມມະທຳ ແລະ ເປັນຮູບປະທຳ ໂດຍສະເພາະໃນມູມມອງກ່ຽວກັບການພັດທະນາການສຶກສາ. ກ່ອນອື່ນໝົດ ຂ້າພະເຈົ້າໄດ້ມີໂອກາດຮ່ວມເປັນຄູຝຶກກັບໜຶ່ງຂອງຜູ້ຊ່ຽວຊານຄູຝຶກ ຂອງຫ້ອງການ ດີວີວີ ອິນເຕີເນເຊິນແນວ ທີ່ ຫຼວງພະບາງ, ໃນການນຳສະເໜີວິທີການສຶກສາແບບຮຽນຮ່ວມ ແລະ ແບບມີສ່ວນຮ່ວມ.



ນອກເໜືອຈາກຄວາມເຂົ້າໃຈໃນການປະຕິບັດຕົວຈິງກ່ຽວກັບວິທີການ, ການ ພົບປະໂດຍບັງເອີນກັບບັນດາຄູອາຈານຈາກເຂດຊົນນະບົດ ເຮັດໃຫ້ ຂ້າພະເຈົ້າໄດ້ມີໂອກາດໄດ້ແລກປ່ຽນຄວາມຄິດຄວາມເຫັນກ່ຽວກັບຜົນ ສະທ້ອນໃນຊີວິດປະຈຳວັນຂອງເຂົາເຈົ້າ. ເລື່ອງເລົ່າຂອງເຂົາເຈົ້າໄດ້ເວົ້າ ເຖິງດ້ວຍຄວາມພາກພູມໃຈ ແລະ ຄວາມຕື່ນເຕັ້ນທີ່ໄດ້ຮັບຄວາມຮູ້ໃໝ່ໆ ແລະ  ຄວາມຫິວໂຫຍໃນການພັດທະນາຕົນເອງ. ຄວາມຈຳເປັນໃນການຈະເລີນເຕີບໂຕໄດ້ປະເກີດຕົວຂຶ້ນຫຼາຍເທົ່າ ເມື່ອຄວາມຕ້ອງການຂອງບຸກຄົນ ກາຍເປັນຄວາມຈຳເປັນໃນການຮັບຜິດຊອບເພື່ອການພັດທະນາຊຸມຊົນ ຂອງຜູ້ເຂົ້າຮ່ວມເອງ. ແຕ່ວ່າ ເປັນໜ້າແປກໃຈສຳລັບຫຼາຍຄົນທີ່ການຮຽນຮູ້ ແນວຄວາມຄິດຂອງທິດສະດີ ມັສໂລ (Maslow) ກ່ຽວກັບຂີດຂອງຄວາມຕ້ອງການ,  ພວກເຮົາໄດ້ຄົ້ນພົບວ່າແຮງຈູງໃຈຕົ້ນຕໍຂອງຜູ້ເຂົ້າຮ່ວມໃນການສິດສອນ ແມ່ນການເປັນຕົວຂອງຕົວເອງ: ການປັບປຸງຄວາມຄິດສ້າງສັນ, ການເປີດກ້ວາງແນວຄວາມຄິດ ແລະ ການແກ້ໄຂບັນຫາ. ການເປັນຕົວຂອງຕົວເອງແມ່ນຕັ້ງຢູ່ຈຸດສູງສຸດຂອງຮູບປາລາມິດ(ຮູບສາມຫຼ່ຽມ)ຂອງຂີດ ຄວາມຕ້ອງການຂອງທິດສະດີ Maslow, ທີ່ເອີ້ນວ່າ “ຄວາມຕອງການຂັ້ນພື້ນຖານຂອງມະນຸດ”.

ປະສົບປະການນີ້ໄດ້ສະແດງໃຫ້ຂ້າພະເຈົ້າເຫັນໄດ້ເຖິງຄວາມແຕກຕ່າງຫຼາຍໆຢ່າງ ໃນມຸມມອງຂອງຊາວຕາເວັນຕົກກ່ຽວກັບ “ຄວາມຕ້ອງການ ” ໃນບັນດາປະເທດດ້ອຍພັດທະນາ. ໃນຂະນະທີ່ຜູ້ໃດຜູ້ໜຶ່ງອາດຈະຂັດຂ້ອງ ວ່າເສດຖະກິດເພື່ອການຢູ່ລອດ (ລະບົບກະສິກຳເພື່ອການຜະລິດຫຼາຍຂຶ້ນ, ເງິນເດືອນທີ່ດີກວ່າເກົ່າ, ເຄື່ອງບໍລິໂພກເພີ່ມຂຶ້ນ) ເປັນຄວາມກັງວົນຫຼັກ ແລະ ຄວນໄດ້ຮັບການເອົາໃຈໃສ່ໃນວາລະການພັດທະນາລະດັບຊາດ ແລະ ລະດັບສາກົນ, ຄວາມຕ້ອງການທີ່ຢາກມີທີ່ດິນຢູ່ ປະກົດວ່າບໍ່ ໄດ້ຈັດເຂົ້າໃນໝວດດັ່ງກ່າວ. ການພັດທະນາອາດຊີ້ ບອກເຖິງການຂະຫຍາຍໂຕ, ແຕ່ວ່າມັນໄປໄກກວ່າ ນັ້ນ, ມັນກວມລວມເອົາການສຶກສາການເຂົ້າຮ່ວມ, ເອກກະລັກ ແລະ ອິດສະລະ ໃນການກຳນົດອະນາຄົດຂອງຕົວເອງ (ເຂົ້າໃຈໃນ ຖານະຂະບວນການໂຕ້ຕອບ, ປ່ຽນແປງຮູບຮ່າງ ແລະ ວັດທະນະທຳ). ດ້ວຍພື້ນຖານສິ່ງແວດລ້ອມຈາກປະເທດທີ່ພັດທະນາແລ້ວ, ສິ່ງດັ່ງກ່າວມີຄວາມສຳຄັນທີ່ສຸດສຳລັບຂ້າພະເຈົ້າສຳລັບຄວາມຮັບຜິດຊອບ ໃນໂລກທີໜຶ່ງເພື່ອເສັ້ນທາງການພັດທະນາຂອງຕົວເອງທີ່ຖືກຂົ່ມຂູ່ຢ່າງໜັກຈາກໄພທຳມະຊາດ ແລະ ຈາກມະນຸດຂອງບັນດາປະເທດໃນໂລກທີໜຶ່ງ ແລະ ໂລກທີສາມ, ນຳໄປສູ່ໄພພິບັດທາງສິ່ງແວດລ້ອມຂອງທົ່ວໂລກໃນປະຈຸບັນ.

ການພັດທະນາ ແລະ ການສຶກສາເພື່ອການພັດທະນາ ຫຼາຍໆຄັ້ງແມ່ນ ກ່ຽວພັນກັບແນວຄວາມຄິດທີ່ຈະປັບປຸງ “ມາດຕະຖານຊີວິດ” ໂດຍທີ່ພວກເຮົາປົກກະຕິແລ້ວໝາຍເຖິງກຳລັງຊື້ ແລະ ລະດັບວັດຖຸ ອຸປະໂພກທີ່ມີຢູ່. ເຖິງຢ່າງນັ້ນສິ່ງດັ່ງກ່າວກໍຍັງບໍ່ໄດ້ລວມໃນ “ຄຸນນະພາບຂອງຊີວິດ” ດັ່ງທີ່ເກີດຂຶ້ນ ແລ້ວຢູ່ໃນຫຼາຍໆສັງຄົມໃນ ຕາເວັນຕົກ. ຄວາມແຕກຕ່າງ ແມ່ນຮັບຮູ້ໄດ້ງ່າຍ ໂດຍສະເພາະ ໃນປະເທດແບບປະເທດລາວ ທີ່ສ້າງຂຶ້ນບົນພື້ນຖານສັງຄົມທີ່ມີການ ລວມຕົວສູງເປັນສູນການແຫ່ງຄວາມ ເຊື່ອຖື ແລະ ເຕົ້າໂຮມຂອງຄອບຄົວ ແລະ ເປັນບ່ອນທີ່ຄວາມໄວ້ວາງໃຈ ແລະ ມິດຕະພາບມີບົດບາດສຳຄັນໃນການພົວພັນດ້ານວຽກງານ. ນອກນີ້ຍັງເປັນປະເທດທີ່ສະໜອງແຫຼ່ງ ຊັບພະຍາກອນທຳມະຊາດທີ່ກ້ວາງຂວາງ, ໃນນັ້ນມີເຄື່ອງປ່າຂອງດົງ, ພະລັງງານນ້ຳຕົກ, ແລະ ຄວາມຫຼາກຫຼາຍຂອງພືດພັນ ແລະ ສັດລ້ຽງ ທີ່ຊ່ວຍໃຫ້ເຄື່ອງບໍລິໂພກຂອງຄົນລາວອຸດົມສົມບູນຂຶ້ນ. ໄດ້ເກີດມີການຖົກຖຽງກ່ຽວ ກັບເລື່ອງ “ຖືກພັດທະນາ” ແລະ “ການພັດທະນາ ” ໄດ້ເຮັດໃຫ້ຂ້າພະເຈົ້າຄິດເຖິງການ ສັງເກດການທີ່ໂດ່ງດັງຂອງນັກ ເສດຖະສາດ Arne Naess[1] ຄືຄຳວ່າ “ການພັດທະນາ”



1 Arne Naess, “Sustainable Development and Deep Ecology“. In Ethics of Environment and Development: Global Challenge, International Response, ed. R.J. Engel and J.G. Engel. 87-96



ຄວນຈະນຳໄປໄຊ້ໃຫ້ຖືກຕ້ອງໃນທຸກປະເທດທີ່ລົ້ມເຫຼວໃນການພັດທະນາທາງດ້ານສິ່ງແວດລ້ອມ ແລະ ສັງຄົມແບບຍືນຍົງ. ດັ່ງນັ້ນ, ໜ່ວຍງານພາຍນອກຂອງໂລກທີໜຶ່ງຈຶ່ງຕ້ອງໄດ້ເອົາໃຈໃສ່ ໂດຍສະເພາະເມື່ອມີໂຄງການສົ່ງເສີມການພັດທະນາຢູ່ໃນພາກພື້ນ ບໍ່ຄວນໃຊ້ແນວພັນ ແລະອົງປະກອບທີ່ປະສົງຮ້າຍທີ່ມີແບບວິທີຄິດໃນແບບ “ພວກເຮົາ”, ແຕ່ວ່າຄວນສົ່ງເສີມ (ຕາມທີ່ພວກເຮົາຮູ້) ເສັ້ນທາງການພັດທະນາທີ່ເໝາະສົມ, ມີວັດທະນາທຳທີ່ຝັງເລິກ ແລະ ເປັນເຈົ້າຂອງ ໂດຍບຸກຄົນທີ່ອາໃສຢູ່ທີ່ນີ້. ຢູ່ໃນປະເທດທີ່ມີຮີດຄອງປະເພນີແບບຊາວພຸດ ຍົກຕົວຢ່າງ ເຂົາເຈົ້າສາມາດເລືອກ “ທີ່ຈະດຳລົງຊີວິດຢ່າງຖືກຕ້ອງເໝາະສົມ” (ປະກອບສຳມາອາຊີບ), ຊຶ່ງເປັນໜຶ່ງຂອງອົງປະກອບຂອງ ເສັ້ນທາງແປດຊັ້ນໄປສູ່ແສງສະຫວ່າງ, ບົນພື້ນຖານການປະຕິບັດອັນຖືກຕ້ອງ ແລະ ມີຈະລິຍະທຳຂອງການບໍ່ສະແຫວງຫາຜົນປະໂຫຍດ, ຊຶ່ງຖືວ່າເປັນຮາກຖານຂອງ “ສັງຄົມໃນອຸດົມຄະຕິ”.

ເຊັ່ນດຽວກັນ ຄຳຖາມເຖິງສິດການເປັນເຈົ້າຂອງແມ່ນມາເຖິງຈຸດຂອງການເດີນທາງໄປພາກສະໜາມຂອງພວກເຮົາ, ໃນລະຫວ່າງທີ່ພວກເຮົາໄດ້ໄປຢ້ຽມຢາມສູນຮຽນຮູ້ຊຸມຊົນ ຢູ່ທີ່ເມືອງນອງ ແລະ ເມືອງເຊໂປນ ເພື່ອເຂົ້າໃຈ ເຖິງວິທີການນຳໃຊ້ຂອງປະຊາຊົນທ້ອງຖິ່ນ ແລະ ວິທີ ທີ່ເຂົາເຈົ້າຈະພັດທະນາໃນຕໍ່ໜ້າ. ສູນດັ່ງກ່າວໄດ້ຖືກສ້າງຂຶ້ນດ້ວຍການຊ່ວຍເຫຼືອສ່ວນໜຶ່ງຂອງອົງການ ດີວີວີ ອິນເຕີເນເຊີນແນວ, ແຕ່ສິ່ງສຳຄັນແມ່ນການບຳລຸງຮັກສາ ແລະ ການຄຸ້ມຄອງນຳໃຊ້ສູນດັ່ງກ່າວເຂົ້າໃນການຈັດກິດຈະກຳໂດຍປັດສະຈາກ ການຊ່ວຍເຫຼືອຈາກພາຍນອກ, ມັນສະທ້ອນໃຫ້ເຫັນເຖິງແນວຄວາມຄິດ ແລະ ຄວາມຕ້ອງການຂອງຊາວບ້ານເອງ. ພະນັກງານຂອງລັດກໍໄດ້ຮ່ວມ ເດີນທາງກັບພວກເຮົາເຊັ່ນດຽວກັນ, ມັນກໍຈະແຈ້ງຢູ່ແລ້ວວ່າຖານະຄວາມຍືນຍົງທາງດ້ານການເງິນຂອງສູນ, ຂອງຄູສອນ, ຂອງຜູ້ບໍລິຫານສູນແມ່ນໄດ້ຮັບການຊ່ວຍເຫຼືອໂດຍຄວາມພະຍາຍາມຮ່ວມກັນຂອງທ້ອງຖິ່ນ ແລະ ພາກລັດ. ນອກຈາກເງິນເດືອນທີ່ພາກລັດຈ່າຍໃຫ້ແລ້ວ ພະນັກງານຂອງສູນ ຮຽນຮູ້ຊຸມຊົນ ຍັງໄດ້ຮັບການຊ່ວຍເຫຼືອຈາກປະຊາຊົນທ້ອງຖິ່ນ ໃນຮູບແບບຂອງການປະກອບສ່ວນ ເຊັ່ນ ແນວພັນປູກ ຫຼື ກຳລັງແຮງງານໃນລະດູປູກຝັງ. ຕາມທຳມະດາແລ້ວແຮງຈູງໃຈປະເພດນີ້ຈະບໍ່ເຫັນໃນບົດລາຍງານ ລວມຍອດຜະລິດຕະພັນພາຍໃນ ປະຈຳປີຂອງປະເທດ, ເຖິງຢ່າງນັ້ນ, ມັນກໍຍັງມີຜົນກະທົບອັນສຳຄັນ ແລະ ຜົນສະທ້ອນໃຫ້ການພົວພັນທ້ອງຖິ່ນ ໃນການແລກປ່ຽນ, ຄວາມເປັນເຈົ້າການ ແລະການປະສານງານຫຼາຍຂຶ້ນຢູ່ ໃນຊຸມຊົນ. ດ້ວຍເຫດນີ້ ມັນຈຶ່ງມີຄວາມຈຳເປັນທີ່ຕ້ອງເບິ່ງຄືນໃນຫຼາຍໆຕົວຊີວັດທີ່ແຕກຕ່າງກັນຂອງການພັດທະນາ, ເມື່ອມີການເລືອກທິດທາງ ແລະ ນຳໃຊ້ຍຸດທະສາດແບບປ່ຽນແປງຕາມຄວາມເໝາະສົມ ທີ່ຊ່ວຍໃຫ້ປະຊາຊົນທ້ອງຖິ່ນກຳນົດວາລະກອງປະຊຸມໄດ້.

ບັນດາສູນຮຽນຮູ້ຊຸມຊົນໄດ້ຖືກສ້າງຂຶ້ນເພື່ອຕອບສະໜອງສະຖານທີ່ເພື່ອຈັດກິດຈະກຳຂອງຊຸມຊົນ, ເພື່ອການຮຽນຮູ້ຂອງຜູ້ໃຫຍ່, ການຝຶກອົບຮົມວິຊາຊີບ, ຫ້ອງຮຽນຮູ້ໜັງສື, ເພື່ອຮັບໃຊ້ຄວາມຕ້ອງການຂອງປະຊາຊົນທີ່ຢູ່ຫ່າງໄກສອກຫຼີກໃນພັດທະນາຕົນເອງ ແລະ ປັບປຸງທັກສະຊີວິດ. ເລີ່ມຈາກການພັດທະນາ (ດັ່ງນິຍາມຂ້າງເທິງ) ໃນຄວາມເປັນຈິງແມ່ນຂະບວນການສຶກສາອັນໜຶ່ງ ແລະ ການສຶກສາແມ່ນຂະບວນການຂອງວັດທະນະທຳ, ມັນເປັນສິ່ງຈຳເປັນເພື່ອສ້າງພາລະບົດບາດຂອງອົງການຈັດຕັ້ງພາຍນອກ ໃນການແຊກແຊງເຂົ້າໃນຂະບວນການເຫຼົ່ານີ້ໄວ້ລ່ວງໜ້າ. ຖ້າຫາກວ່າປະຊາຊົນທ້ອງຖິ່ນມີຄວາມພຶງພໍໃຈໃນການແຊກແຊງດັ່ງກ່າວ ມັນກໍມີຄວາມຈຳເປັນຕ້ອງນຳໃຊ້ທັງສອງເສັ້ນທາງ, ບໍ່ພຽງແຕ່ຈາກຜູ້ໃຫ້ທຶນຫາຜູ້ໄດ້ຮັບແຕ່ວ່າໃນທາງກັບກັນໃນລັກສະນະກໍ່ສ້າງ ແລະ ໂຕ້ຕອບແບບສ້າງສັນ ດ້ວຍຄວາມເຕັມໃຈ ທາງຜູ້ໃຫ້ທຶນເພື່ອຮັບຮອງເອົາຄວາມຕ້ອງການຂອງຜູ້ຮັບທຶນ ແລະ ເຂົ້າໃຈ ເຖິງໂຄງສ້າງ ແລະ ແນວຄວາມຄິດຂອງວຽກງານຂອງຕົນ. ຂ້າພະເຈົ້າຄິດວ່າ ຢູ່ນີ້ອາດມີຫຼາຍກວ່າຢູ່ເອີຣົບ ທີ່ເຂົາເຈົ້າເຫັນໄດ້ເຖິງການສຶກສາຂັ້ນພື້ນຖານທີ່ກຳນົດທິດທາງຂອງປະເທດທີ່ຈະກ້າວໄປ: ມີຈິນຕະນາການຫຼາຍຂຶ້ນໃນ ການສຶກສາຜູ້ໃຫຍ່ ແລະການພັດທະນາ, ເພາະສະນັ້ນ ຈຶ່ງມີຄວາມສຳຄັນທີ່ຈະຄົ້ນຫາຄວາມໝາຍສຳຄັນລະຫວ່າງ ການປະສົມປະສານເຂົ້າໃນໂລກທີ່ຂັບເຄື່ອນຕະຫຼາດໂລກາພິວັດ ແລະຈຳຕ້ອງປົກປັກຮັກສາວັດທະນະທຳທີ່ຢູ່ຫ່າງໄກສອກຫຼີກຢູ່ໃນສັງຄົມທີ່ມີການພົວພັນກັນຫຼາຍຂຶ້ນ.

ປະສົບປະການສ່ວນຫຼາຍຂອງຂ້າພະເຈົ້າໃນທີ່ນີ້ ໄດ້ຊ່ວຍໃຫ້ຂ້າພະເຈົ້າໄດ້ເຫັນບາງສິ່ງທີ່ທ້າທາຍທີ່ເກີດຂຶ້ນໃນສະພາບຕົວຈິງຂອງເຂົາເຈົ້າ ແລະຊ່ວຍ ໃຫ້ຂ້າພະເຈົ້າໄດ້ເຂົ້າໃຈວ່າ ທຸກໆຊຸມຊົນມີຄວາມແຕກຕ່າງກັນ, ໂດຍມີຄວາມແຕກຕ່າງໃນດ້ານຄວາມຕ້ອງການ, ດ້ານຄວາມສາມາດ ແລະ ລະດັບຂອງການມີສ່ວນຮ່ວມ. ດັ່ງນັ້ນ, ຈຶ່ງມີການລົງພາກປະຕິບັດຕົວຈິງທີ່ດີ, ເອົາໃຈໃສ່ປະກອບສ່ວນ, ມີຄວາມອົດທົນ, ເຊັ່ນດຽວກັນກັບມີການທົດລອງ ແລະມີຄວາມຜິດພາດ, ເພື່ອຈະພົບວິທີແກ້ໄຂບັນຫາໃນຊຸມຊົນ ທີ່ຮູ້ໄດ້ເຖິງຄວາມຕ້ອງການຂອງປະຊາຊົນ, ຮັບຮູ້ໃນສະພາບແວດລ້ອມ ແລະ ສິ່ງອື່ນໆ ແລະມີຄວາມຍືນຍົງໃນໄລຍະຍາວ. ການປັບປຸງແກ້ໄຂຄວາມອຸດົມຮັ່ງມີນີ້ ສາມາດເກີດຂຶ້ນໄດ້ ໂດຍສ້າງຄວາມອາດສາມາດໃຫ້ປະຊາຊົນ ແລະ ສາຍພົວພັນຂອງເຂົາເຈົ້າ. ດ້ວຍຄຳເວົ້າສັ້ນໆ, ຂ້າພະເຈົ້າຕ້ອງການຊຸກຍູ້ທຸກໆຄົນ ໃຫ້ເອົາໃຈໃສ່ກ່ຽວກັບບັນຫານີ້ ເພື່ອມີສ່ວນຮ່ວມໃນວຽກງານຂອງ ຫ້ອງການ ດີວີວີ ອິນເຕີເນເຊີນແນວ, ມີສ່ວນຮ່ວມພະຍາຍາມໃນການພັດທະນາຕົນເອງຢູ່ໃນພາກພື້ນ.



Education for Everyone. Worldwide.
Lifelong.

# ພິທີມອບ-ຮັບເຄື່ອງໃຫ້ກົມການສຶກສານອກໂຮງຮຽນສຳລັບການປະຊາ ສຳພັນວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື

ໃນວັນທີ 2 ເດືອນກັນຍາ 2015 ໄດ້ມີການຈັດພິທີ ມອບ-ຮັບເຄື່ອງ ຢູ່ທີ່ອາຄານຂອງກົມສຶກສານອກໂຮງຮຽນ (ກສນ) ຂອງກະຊວງສຶກສາທິການ ແລະກິລາ. ທ່ານ ອູເວີ ກາກເທີສະແລັກເກີ, ຜູ້ອຳນວຍການປະຈຳພາກພື້ນຂອງຫ້ອງການ ດີວີວີ ອິນເຕີເນເຊີນແນວ ໄດ້ເປັນກຽດມອບເສື້ອຢືດ ມີຄໍ ແລະ ເສື້ອຢືດຄໍມົນ ສຳລັບນຳໄປໄຊ້ເຂົ້າໃນງານ ສະເຫຼີມສະຫຼອງວັນຄົບຮອບ 50 ປີ ຂອງວັນລຶບລ້າງວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື. ສະໂລແກນຂອງປີນີ້ “ການຮູ້ໜັງສື ແລະ ສັງຄົມທີ່ຍືນຍົງ” ໄດ້ເນັ້ນເຖິງຄວາມສຳຄັນຂອງປະຊາກອນທີ່ຮູ້ໜັງສື ໃນການ ພັດທະນາປະເທດຊາດ ແລະ ສັງຄົມ. ໃນໂອກາດນີ້ ດຣ. ກ້າ ສະເຫຼີມສຸກ, ຫົວໜ້າກົມ ສຶກສານອກໂຮງຮຽນ ໄດ້ເນັ້ນໜັກ ເຖິງຄວາມສຳຄັນຂອງການພັດທະນາຂອງການສຶກສານອກ ໂຮງຮຽນໃນຕໍ່ໜ້າ ແລະ ຂອງ ສປປລາວ, ການພັດທະນາ ນະໂຍບາຍ ທີ່ເໝາະສົມ ແລະ ສອດຄ່ອງຂອງການຮຽນຮູ້ຕະຫຼອດຊີວິດ. ຫ້ອງການ ດີວີວີ ອິນເຕີເນເຊີນແນວ ມີຄວາມມຸ້ງໝັ້ນທີ່ຈະສະໜັບສະໜູນໃນວຽກງານນີ້.

# ວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື

ການຮູ້ໜັງສືໝາຍເຖິງຄວາມສາມາດອ່ານ, ຂຽນ ແລະ ເຂົ້າໃຈບົດງ່າຍໆ ທີ່ພົວພັນເຖິງຊີວິດປະຈຳວັນ ແລະ ໄລ່ເລກຂັ້ນພື້ນຖານ. ການຮູ້ໜັງສືຮຽກຮ້ອງ ໃຫ້ມີການພັດທະນາທັກສະໃນການອ່ານ, ຂຽນ ແລະ ໄລ່ເລກແບບຕໍ່ເນື່ອງ. ໃນຫຼາຍປະເທດໂຄງການຫຼັກສູດການຮູ້ໜັງສືແມ່ນທຽບເທົ່າກັບປະຖົມ 5 ປີ.

ໃນກອງປະຊຸມສາກົນລະດັບລັດຖະມົນຕີ ກະຊວງສຶກສາທິການໄດ້ ຈັດຂຶ້ນ ໃນປີ 1965 ທີ່ນະຄອນເຕເຮລັງ ປະເທດອີຣານ ແລະ ໄດ້ສະເໜີໃຫ້ມີວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື. ປີຕໍ່ມາ ຄືປີ 1966 ວັນທີ 8 ກັນຍາ ຈັດຕັ້ງສະເຫຼີມສະຫຼອງວັນສຳຄັນດັ່ງກາວ ແລະ ກໍໄດ້ມີ ການສະເຫຼີມສະຫຼອງແຕ່ນັ້ນເປັນຕົ້ນມາເຊິ່ງໃນແຕ່ລະປີ ຈະມີຫົວຂໍ້ທີ່ແຕກຕ່າງກັນໄປ. ວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື ເປັນວັນໜຶ່ງທີ່ສຳຄັນໃນວຽກງານສຶກສາ ທີ່ຈະເຕືອນໃຫ້ພວກເຮົາຮູ້ ແລະ ເຂົ້າໃຈເຖິງຄວາມສຳຄັນຂອງການຮູ້ໜັງສື, ຄວາມຮູ້ໜັງສືແມ່ນເປັນສິດທິຂອງທຸກຄົນ ເພື່ອຈະຊ່ວຍໃຫ້ພວກເຮົາໄດ້ຫຼຸດພົ້ນຈາກຄວາມບໍ່ຮູ້, ຫຼຸດພົ້ນຈາກຄວາມທຸກຈົນ, ຫຼຸດພົ້ນຈາກຄວາມເຈັບເປັນ ແລະ ສາມາດນຳເອົາສິ່ງທີ່ຮູ້ມານຳໃຊ້ໃນຊີວິດປະຈຳວັນເພື່ອໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ. ໂດຍສະເພາະແມ່ນຜູ້ທີ່ດ້ອຍໂອກາດທາງດ້ານການສຶກສາເຊິ່ງຕົ້ນຕໍແມ່ນ ຄວາມບໍ່ຮູ້ໜັງສື ເຊິ່ງມັນເປັນ ອຸປະສັກອັນໃຫຍ່ຫຼວງຕໍ່ກັບການ ພັດທະນາຕົນເອງ ພັດທະນາຊຸມຊົນ ພັດທະນາສັງຄົມ ແລະ ທີ່ສຳຄັນການ ພັດທະນາປະເທດຊາດ.

ໃນສະພາບການປະຈຸບັນທີ່ພວກເຮົາໄດ້ຂ້າມຜ່ານສະທັດສະຫວັດດ້ານການພັດທະນາ ເປົ້າໝາຍທີ 2 “ບັນລຸການສຶກສາຂັ້ນປະຖົມຢ່າງທົ່ວເຖິງ” ແລະ ກຳລັງກ້າວເຂົ້າສູ່ການປະຕິບັດ ເປົ້າໝາຍ 4 ສຳລັບການພັດທະນາແບບ ຍືນຍົງ “ຮັບປະກັນການຮຽນຮ່ວມທີ່ມີຄຸນນະພາບ ແລະ ທົ່ວເຖິງ ແລະ ສົ່ງເສີມໂອກາດການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນ”. ພວກເຮົາ ຕ້ອງໄດ້ຊ່ວຍກັນ ເອົາໃຈໃສ່ ແລະ ຫາທາງສະໜັບສະໜູນໃຫ້ທຸກຄົນມີ ໂອກາດໃນການຮຽນຮູ້ ແລະ ພັດທະນາຕົນເອງເພື່ອໃຫ້ສັງຄົມມີຄວາມຍືນຍົງ ແລະ ມີຄວາມເທົ່າທຽມກັນ.





### ສິ່ງທີ່ໜ້າສົນໃຈ

ເວັບໄຊ ທີ່ສຳຄັນໃນພາກພື້ນ
www.aspbae.org
www.pria.org

### ສິ່ງພິມທີ່ໜ້າສົນໃຈ

ການສຶກສາຜູ້ໃຫຍ່ ແລະ ການພັດທະນາ
AED 79: Networking - Rio + 20 - Lifelong Learning
AED 80: Post 2015
AED 81: Communities

ທັດສະນະນານາຊາດໃນວຽກງານການສຶກສາຜູ້ໃຫຍ່
IPE 69: Youth and Adult Education in Prisons
IPE 70: Research and Development in Adult Learning and Education in Hungary
IPE 71: Adult education in an interconnected world

### ຈົດໝາຍຂ່າວ

The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

### ສິ່ງພິມໃໝ່

Newsletter: Lifelong Learning and Non-formal Education in Lao PDR and Southeast Asia
At the Sunset of MDG and EFA: Lifelong Learning National Development and the Future
Sharing for Learning in Lao PDR: DVV International Engaged in Lifelong Learning for Sustainable Development in Asia Pacific
Education and life long learning for Sustainable Develoment: Asia Pacific Consultation

ຈັດພິມໂດຍ ດີວີວີ ອິນເຕີເນເຊີນແນວ ພາຍໃຕ້ການຮ່ວມມືກັບຄູ່ຮ່ວມພັດທະນາໃນ ສປປ ລາວ, ກຳປູເຈຍ ແລະ ພາກພື້ນອາຊີຕາເວັນອອກສ່ຽງໃຕ້.

ຄະນະບັນນາທິການ: ດຣ. ກ້າ ສະເຫຼີມສຸກ, ພິລານີ ພິດສະໄໝ, ຂັນທອງ ອິນທະຈັກ
ທີມງານບັນນາທິການ: ບຸນມາກ ຕີຫຼາພັນນິນ, ດາລຸນນີ ສີສຸລາດ, ດອກຄຳ ຊົມສີຫາປັນຍາ, ສົມໃຈ ແກ້ວເມກ, ຄາໂຣລິນ ຄຳເນີ
ບັນນາທິການ: ອູເວີ ກາເຕີນສະແລເກີ

ດີວີວີ ອິນເຕີເນເຊີນແນວ
ຫ້ອງການປະຈຳພາກພື້ນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 315832-3
ແຟັກ:+856 21 312511
info@dvv-international.la
www.dvv-international.la

**Education for Everyone. Worldwide. Lifelong.**